ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ

ເລກທີ 406 /ຫສນຍ

ນະຄອນຫຼວງວຽງຈັນ, ວັນທີ 26. ເມສາ. 2021

ດ່ວນທີ່ສຸດ

# ແຈ້ງການ

ຮຽນ: - ທ່ານ ຮອງນາຍົກລັດຖະມົນຕີ, ຫົວໜ້າຄະນະສະເພາະກິດປ້ອງກັນ, ຄວບຄຸມ ແລະ ແກ້ໄຂການແຜ່ລະບາດ ຂອງພະຍາດ COVID- 19 ທີ່ເຄົາລົບ.

- ທ່ານ ລັດຖະມົນຕີກະຊວງສາທາລະນະສຸກ ທີ່ນັບຖື.
- ທ່ານ ເຈົ້າຄອງນະຄອນຫຼວງວຽງຈັນ ແລະ ບັນດາທ່ານ ເຈົ້າແຂວງທົ່ວປະເທດ ທີ່ນັບຖື.

ເລື່ອງ: ທິດຊີ້ນຳກ່ຽວກັບການສືບຕໍ່ຈັດຕັ້ງປະຕິບັດຄຳສັ່ງສະບັບເລກທີ 15/ນຍ, ລົງວັນທີ 21 ເມສາ 2021 ວ່າດ້ວຍການເພີ່ມທະວີມາດຕະການສະກັດກັ້ນ, ຄວບຄຸມ ແລະ ກຽມພ້ອມຮອບດ້ານ ເພື່ອຕ້ານພະຍາດ COVID-19.

- ອີງຕາມ ດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 93/ນຍ, ລົງວັນທີ 3 ມີນາ 2017;
- ອີງຕາມ ຄຳສັ່ງຂອງທ່ານ ນາຍົກລັດຖະມົນຕີ ສະບັບເລກທີ 15/ນຍ, ລົງວັນທີ 21 ເມສາ 2021;
- ອີງຕາມ ຄຳສັ່ງແນະນຳ ຂອງຄະນະເລຂາທິການສູນກາງພັກ ສະບັບເລກທີ 87/ຄລສພ, ລົງວັນທີ 25 ເມສາ 2021 ວ່າດ້ວຍການເພີ່ມທະວີຄວາມຮັບຜິດຊອບ ຂອງຄະນະພັກແຕ່ລະຂັ້ນໃນການສືບຕໍ່ສະກັດກັ້ນ, ປ້ອງກັນ ຄວບຄຸມ ແລະ ແກ້ໄຂ ພະຍາດໂຄວິດ-19;
- ອີງຕາມ ຂໍ້ມູນຂອງຄະນະສະເພາະກິດປ້ອງກັນ, ຄວບຄຸມ ແລະ ແກ້ໄຂການແຜ່ລະບາດ ຂອງພະຍາດ COVID-19 ຂັ້ນສູນກາງ ກໍຄືຂະແໜງການ ແລະ ທ້ອງຖິ່ນຈຳນວນໜຶ່ງ;
- ອີງຕາມການຊີ້ນຳ ຂອງທ່ານ ນາຍົກລັດຖະມົນຕີ ໃນຄັ້ງວັນທີ 24 ເມສາ 2021.

ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ຂໍຖືເປັນກຽດແຈ້ງຍັງທ່ານຊາບ ດັ່ງນີ້: **ຜ່ານການຈັດຕັ້ງປະຕິບັດຄຳສັ່ງຂອງນາຍົກລັດຖະມົນຕີ ສະບັບເລກທີ 15/ນຍ, ລົງວັນທີ 21 ເມສາ 2021 ວ່າດ້ວຍການເພີ່ມທະວີມາດຕະການສະກັດກັ້ນ, ຄວບຄຸມ ແລະ ກຽມຄວາມພ້ອມຮອບດ້ານ ເພື່ອຕ້ານພະຍາດ COVID-19 ເຫັນວ່າຄະນະສະເພາະກິດ, ກໍຄືບັນດາການນຳຂອງຂະແໜງການ,** ອົງການຂັ້ນສູນກາງ ແລະ ອົງການປົກຄອງທ້ອງຖິ່ນ ແຕ່ລະຂັ້ນ ໃນຂອບເຂດທົ່ວປະເທດ ລ້ວນແຕ່ໄດ້ເອົາໃຈໃສ່ ແລະ ສຸມທຸກຄວາມພະຍາຍາມເຂົ້າໃນການຈັດຕັ້ງປະຕິບັດຄຳສັ່ງດັ່ງກ່າວ ແລະ ໄດ້ຮັບຜົນສຳເລັດໃນລະດັບດີສົມຄວນ, ແຕ່ເຖິງຢ່າງໃດກໍຕາມ ອີງຕາມຂໍ້ມູນທີ່ໄດ້ຮັບເບື້ອງຕົ້ນ ການຈັດຕັ້ງປະຕິບັດຄຳສັ່ງດັ່ງກ່າວ ຂອງຫຼາຍພາກສ່ວນທັງສູນກາງ ແລະ ທ້ອງຖິ່ນ ໃນຫຼາຍດ້ານ ຍັງບໍ່ທັນເອກະພາບກັນ. ສະນັ້ນ ເພື່ອໃຫ້ຄຳສັ່ງຂອງທ່ານນາຍົກລັດຖະມົນຕີ ໄດ້ຮັບການຈັດຕັ້ງປະຕິບັດຢ່າງເຕັມສ່ວນ ແລະ ເປັນເອກະພາບ ທັງມີປະສິດທິຜົນ, ທ່ານ ນາຍົກລັດຖະມົນຕີ ໄດ້ຊີ້ນຳໃຫ້ຄະນະສະເພາະກິດ, ບັນດາຂະແໜງການທີ່ກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນ ເອົາໃຈໃສ່ຕື່ມໃນການຈັດຕັ້ງປະຕິບັດຄຳສັ່ງດັ່ງກ່າວ ໃນບາງວຽກງານຄື:

1. ໃຫ້ຄະນະສະເພາະກິດ ປ້ອງກັນ, ຄວບຄຸມ ແລະ ແກ້ໄຂການແຜ່ລະບາດ ຂອງພະຍາດ COVID- 19 ແຕ່ລະຂັ້ນ ຫັນຄໍາສັ່ງເລກທີ 15/ນຍ, ລົງວັນທີ 21 ເມສາ 2021 ໃຫ້ເປັນແຜນປະຕິບັດລະອຽດ ເພື່ອເປັນບ່ອນອີງໃຫ້ທຸກພາກສ່ວນ, ທຸກຂັ້ນ ສາມາດຈັດຕັ້ງປະຕິບັດໄດ້ໃຫ້ມີລັກສະນະທີ່ເປັນເອກະພາບ ໃນນີ້ ວຽກງານຈຸດສຸມບາງດ້ານທີ່ຄວນເອົາໃຈໃສ່ ແມ່ນ:

- ກວດກາ ແລະ ຂຶ້ນແຜນຄວາມຕ້ອງການດ້ານຕ່າງໆ ລວມທັງອຸປະກອນເຄື່ອງມື, ຢາປົວພະຍາດ, ງົບປະມານໃຊ້ຈ່າຍຕ່າງໆ ໃຫ້ສາມາດຮັບໃຊ້ການປະຕິບັດວຽກງານຂອງແຕ່ລະບ່ອນ ໃນແຕ່ລະໄລຍະ;

- ປະສານສົມທົບກັບພາກສ່ວນກ່ຽວຂ້ອງ ທັງພາຍໃນ ແລະ ຕ່າງປະເທດ ເພື່ອລະດົມການຊ່ວຍເຫຼືອໃນດ້ານຕ່າງໆທີ່ຈໍາເປັນ ເປັນຕົ້ນແມ່ນ ຊ່ຽວຊານ, ແພດໝໍ, ເຄື່ອງມືທາງການແພດ, ອຸປະກອນປ້ອງກັນການຕິດເຊື້ອ, ຢາປົວພະຍາດ, ທຶນຮອນ ແລະ ດ້ານອື່ນໆ. ຄຽງຄູ່ກັນນັ້ນ, ກໍໃຫ້ສືບຕໍ່ລະດົມຈາກພາກທຸລະກິດ ແລະ ທຸກພາກສ່ວນໃນສັງຄົມ ລວມທັງອົງການສາສະໜາແຕ່ລະຂັ້ນ ທີ່ມີຈິດໃຈຢາກປະກອບສ່ວນຊ່ວຍເຫຼືອເຂົ້າໃນວຽກງານດັ່ງກ່າວນີ້;

- ສັງລວມຜົນງານການປະກອບສ່ວນຊ່ວຍເຫຼືອທາງດ້ານວັດຖຸ ແລະ ຈິດໃຈ, ພ້ອມທັງ ຄົ້ນຄວ້າຮູບການປະຕິບັດຍ້ອງຍໍຕໍ່ບຸກຄົນ ແລະ ນິຕິບຸກຄົນ ທີ່ໄດ້ປະກອບສ່ວນຊ່ວຍເຫຼືອດັ່ງກ່າວຕາມນະໂຍບາຍ ກໍຄືນິຕິກໍາກ່ຽວຂ້ອງໄດ້ກໍານົດໄວ້ໃຫ້ຖ່ອງທັນເວລາ.

2. ໃຫ້ຄະນະສະເພາະກິດ ປ້ອງກັນ, ຄວບຄຸມ ແລະ ແກ້ໄຂການແຜ່ລະບາດ ຂອງພະຍາດ COVID-19 ຂັ້ນສູນກາງ ປະສານສົມທົບກັບຂະແໜງການ, ອົງການຂັ້ນສູນກາງກ່ຽວຂ້ອງ ແລະ ທ້ອງຖິ່ນຕ່າງໆໃນທົ່ວປະເທດ ສືບຕໍ່ກະກຽມສະຖານທີ່ບ່ອນກັກກັນ ແລະ ບ່ອນປິ່ນປົວຜູ້ຕິດເຊື້ອ ໃຫ້ພຽງພໍ ຊຶ່ງນອກຈາກໂຮງໝໍຕ່າງໆແລ້ວ ໃຫ້ໝູນໃຊ້ສະຖານທີ່ຕ່າງໆ ທີ່ເໝາະສົມ ລວມທັງສູນກິລາ, ພ້ອມທັງ ແບ່ງຄວາມຮັບຜິດຊອບໃຫ້ກັນລະຫວ່າງ ຂະແໜງການຂັ້ນສູນກາງ ແລະ ທ້ອງຖິ່ນ ໃຫ້ລະອຽດຈະແຈ້ງ ໃນນີ້:

1) ກະຊວງສາທາລະນະສຸກ ສືບຕໍ່ຮັບຜິດຊອບ:

- ສະຖານທີ່ປິ່ນປົວທີ່ຢູ່ໃນໂຮງໝໍຕ່າງໆ ຂອງກະຊວງ ແລະ ຮັບຜິດຊອບທາງດ້ານເຕັກນິກວິຊາທາງດ້ານການແພດດ້ວຍມາດຕະຖານທີ່ເອກະພາບໃນທຸກສະຖານທີ່ປິ່ນປົວທັງສູນກາງ ແລະ ທ້ອງຖິ່ນ, ທັງໃຫ້ສືບຕໍ່ສອບຖາມຫາປະຫວັດການເຄື່ອນໄຫວຂອງຜູ້ຕິດເຊື້ອທຸກຄົນ ຕິດພັນກັບການຕິດຕາມເອົາຜູ້ສໍາຜັດໃກ້ຊິດ ມາກວດຫາເຊື້ອ ແລະ ລະດົມໃຫ້ຜູ້ຕິດເຊື້ອ ແຈ້ງຂໍ້ມູນສະພາບການເຄື່ອນໄຫວໃນໄລຍະທີ່ມີການພົວພັນກັບຜູ້ຕິດເຊື້ອທີ່ຕົນໄດ້ໃກ້ຊິດ ເພື່ອເປັນຂໍ້ມູນຮັບໃຊ້ການປະຕິບັດໜ້າທີ່ຂອງທີມງານວິຊາການກ່ຽວຂ້ອງ;

- ທຸກໂຮງໝໍ ແລະ ສູນປິ່ນປົວ ຕ້ອງປະຕິບັດທາງດ້ານວິຊາສະເພາະ ທີ່ເປັນເອກະພາບຕາມການແນະນໍາ ຂອງກະຊວງສາທາລະນະສຸກ, ພ້ອມທັງ ຕິດຕາມ ແລະ ຈັດປະເພດຜູ້ຕິດເຊື້ອທີ່ກໍາລັງປິ່ນປົວຢູ່ໂຮງໝໍເປັນແຕ່ລະກໍລະນີໃນແຕ່ລະວັນ. ກໍລະນີຜູ້ຕິດເຊື້ອທີ່ມີອາການໜັກ ໃຫ້ປິ່ນປົວ ແລະ ຕິດຕາມອາການຢູ່ໃນໂຮງໝໍ, ກົງກັນຂ້າມກໍລະນີທີ່ ມີອາການເບົາບາງກໍອາດຍ້າຍໄປຕິດຕາມ, ປິ່ນປົວຢູ່ສະຖານທີ່ຕ່າງໆ ທີ່ໄດ້ກະກຽມໄວ້ ຫຼື ຜູ້ຕິດເຊື້ອໃດ ທີ່ຄອບຄົວມີເງື່ອນໄຂດີ ມີບ່ອນກັກກັນທີ່ຮັບປະກັນຄວາມປອດໄພ ກໍອາດອະນຸຍາດໃຫ້ໄປກັກກັນຢູ່ສະຖານທີ່ຂອງຜູ້ຕິດເຊື້ອນັ້ນເອງ ແຕ່ຕ້ອງປະຕິບັດຕາມການແນະນໍາທຸກຢ່າງຂອງພະນັກງານແພດໝໍ ແລະ ເຈົ້າໜ້າທີ່ທີ່ກ່ຽວຂ້ອງ ເພື່ອຫຼຸດຜ່ອນການແອອັດຢູ່ໂຮງໝໍ ແລະ ສູນປິ່ນປົວຕ່າງໆ. ພ້ອມກັນນັ້ນ ກໍໃຫ້ປຸກລະດົມຜູ້ຕິດເຊື້ອທີ່ມີອາການເບົາບາງ ຢູ່ໃນສູນປິ່ນປົວຕ່າງໆ ເປັນເຈົ້າການ ແລະ ມີສ່ວນຮ່ວມໃນການອະນາໄມສະຖານທີ່ຕ່າງໆທີ່ຕົນເອງປິ່ນປົວຢູ່;

- ໃຫ້ເພີ່ມຈໍານວນບຸກຄະລາກອນທາງການແພດ ລວມທັງພະນັກງານປະຈໍາການ, ອາສາສະໝັກ, ພະນັກງານອາວຸໂສບໍານານ ແລະ ເຈົ້າໜ້າທີ່ກ່ຽວຂ້ອງ ຕາມການເຫັນດີເຫັນພ້ອມຂອງພາກສ່ວນຢູ່ແຕ່ລະສູນປິ່ນປົວ ຕາມຄວາມເໝາະສົມ ທັງໃຫ້ປະຕິບັດນະໂຍບາຍຕ່າງໆ ຕາມບໍລິມາດວຽກທີ່ແຕ່ລະພາກສ່ວນ ແລະ ບຸກຄົນຮັບຜິດຊອບຢ່າງສົມເຫດສົມຜົນ;

- ໃຫ້ແນະນຳແນະນຳວິທີການປ້ອງກັນໃນລະດັບຂັ້ນພື້ນຖານ ສຳລັບຮັບໃຊ້ຢູ່ຄອບຄົວ ກໍຄືສັງຄົມທີ່ມີຄວາມສາມາດປະຕິບັດໄດ້.

2) ກະຊວງປ້ອງກັນປະເທດ ຮັບຜິດຊອບບ່ອນປິ່ນປົວໂຮງໝໍ 103 ແລະ ສູນຈຳກັດບໍລິເວນ ຫຼັກ 27. ສືບຕໍ່ເພີ່ມທະວີການກວດກາ ລາດຕະເວນ ຕາມບົດບາດໜ້າທີ່ຢູ່ ຕາມຊາຍແດນຕ່າງໆ ໃຫ້ເຂັ້ມງວດກວ່າເກົ່າ. ກໍລະນີພົບເຫັນຜູ້ລັກລອບ ແມ່ນໃຫ້ກັກຕົວ ແລະ ປະສານກັບຂະແໜງສາທາລະນະສຸກ ເພື່ອກວດຫາເຊື້ອ COVID-19 ແລະ ກັກຕົວໃຫ້ຄົບ 14 ວັນ, ຈາກນັ້ນ ໃຫ້ດຳເນີນມາດຕະການຕາມກົດໝາຍ ແລະ ລະບຽບການກຳນົດ.

3) ກະຊວງ ປ້ອງກັນຄວາມສະຫງົບ ຮັບຜິດຊອບບ່ອນປິ່ນປົວໂຮງໝໍ 5 ເມສາ ຂອງຕົນ. ສືບຕໍ່ນຳກຳລັງຂອງຕົນແຕ່ລະຂັ້ນປະສານສົມທົບພາກສ່ວນກ່ຽວຂ້ອງ ລົງກວດກາສະຖານທີ່ບັນເທີງ, ຮ້ານຄາຣາໂອເກະ ແລະ ສະຖານທີ່ການບໍລິການທ່ອງທ່ຽວຕ່າງໆ ທີ່ລັດຖະບານ ກໍຄືຂະແໜງການກ່ຽວຂ້ອງ ໄດ້ສັ່ງປິດຊົ່ວຄາວ ໃນໄລຍະເວລາ 14 ວັນ. ຖ້າກວດກາພົບເຫັນກໍລະນີຕ່າງໆ ກໍໃຫ້ດຳເນີນມາດຕະການຕ່າງໆຢ່າງເໝາະສົມ ລວມທັງມາດຕະການບໍລິຫານ, ເສດຖະກິດ ແລະ ອື່ນໆ.

4) ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ສືບຕໍ່ເຜີຍແຜ່ບັນດາຂໍ້ມູນທີ່ພົວພັນເຖິງນະໂຍບາຍ ກໍຄືມາດຕະການຕ່າງໆ ຂອງການຈັດຕັ້ງກ່ຽວຂ້ອງໃຫ້ສັງຄົມຮັບຮູ້ຢ່າງທົ່ວເຖິງ ດ້ວຍການນຳໃຊ້ພາຫະນະສື່ສານຕ່າງໆ ຂອງທຸກຂັ້ນ ຕາມພາລະບົດບາດຂອງຕົນທີ່ກຳນົດໄວ້, ພ້ອມທັງ ຕອບໂຕ້ຂ່າວທີ່ບໍ່ມີຄວາມຈິງໃຫ້ທັນການ.

5) ກະຊວງໂຍທາທິການ ແລະ ຂົນສົ່ງ ເປັນໃຈກາງສົມທົບກັບພາກສ່ວນກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນສືບຕໍ່ອຳນວຍຄວາມສະດວກໃຫ້ແກ່ການນຳເຂົ້າ-ສົ່ງອອກສິນຄ້າ ລະຫວ່າງປະເທດ ແລະ ການຂົນສົ່ງສິນຄ້າພາຍໃນລະຫວ່າງ ແຂວງຕໍ່ແຂວງ, ເມືອງຕໍ່ເມືອງ ແລະ ບ້ານຕໍ່ບ້ານ ໃຫ້ດຳເນີນປົກກະຕິ ບົນພື້ນຖານບົດຮຽນທີ່ເຄີຍປະຕິບັດມາໃນປີ 2020 ຜ່ານມາ ເພື່ອສະໜອງສິນຄ້າ ແລະ ສະບຽງອາຫານ ໃຫ້ສັງຄົມ ພຽງພໍ ຕາມຄຳສັ່ງ 15/ນຍ ແລະ ໃຫ້ປະຕິບັດແຈ້ງການຂອງກະຊວງໂຍທາທິການ ແລະ ຂົນສົ່ງ ສະບັບເລກທີ 242/ຍທຂ, ລົງວັນທີ 23 ເມສາ 2021. ອົງການປົກຄອງທ້ອງຖິ່ນໃດ ຈະອອກແຈ້ງການ ຫຼື ລະບຽບການກ່ຽວກັບການຂົນສົ່ງສິນຄ້າ ແມ່ນໃຫ້ປະສານກັບກະຊວງໂຍທາທິການ ແລະ ຂົນສົ່ງ ເພື່ອໃຫ້ມີຄວາມເປັນເອກະພາບກັນໃນທາງປະຕິບັດຕົວຈິງ.

6) ໃຫ້ກະຊວງ, ອົງການຂັ້ນສູນກາງ, ອົງການປົກຄອງນະຄອນຫຼວງວຽງຈັນ ແລະ ທ້ອງຖິ່ນທີ່ມີການລະບາດພະຍາດຂອງພະຍາດ COVID-19 ໃນວົງກວ້າງ ຈັດຕັ້ງ ແລະ ແນະນຳພະນັກງານທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ເຮັດວຽກທາງລັດຖະການ ຢູ່ເຮືອນ ຫຼື ທີ່ພັກອາໄສ ຜ່ານລະບົບການສື່ສານ, ອີເລັກໂຕຣນິກ ແລະ ເຄືອຂ່າຍອິນເຕີເນັດຕ່າງໆ ເພື່ອທັງໃຫ້ສາມາດປະສານກັນໄດ້ໃນກໍລະນີມີວຽກຈຳເປັນ ທັງເພື່ອປ້ອງກັນບໍ່ໃຫ້ເກີດມີເຫດຕ່າງໆເກີດຂຶ້ນ ຢ່າງເດັດຂາດ.

7) ນະຄອນຫຼວງວຽງຈັນ ແລະ ບັນດາແຂວງ ຮັບຜິດຊອບ ສະຖານທີ່ຈຳກັດບໍລິເວນ ແລະ ບັນດາສູນປິ່ນປົວທີ່ມີແລ້ວ ແລະທີ່ຈະສ້າງຂຶ້ນຊົ່ວຄາວ ເພື່ອຮອງຮັບຜູ້ຕິດເຊື້ອ. ພ້ອມກັນນັ້ນ ກໍໃຫ້ເພີ່ມທະວີບົດບາດການຄຸ້ມຄອງ, ການຕິດຕາມ ແລະກວດກາການຈັດຕັ້ງປະຕິບັດມາດຕະການປ້ອງກັນ, ຄວບຄຸມ ແລະ ແກ້ໄຂການແຜ່ລະບາດໃນຂອບເຂດຄວາມຮັບຜິດຊອບຂອງຕົນ.

ໃນກໍລະນີ ມີຜູ້ຕິດເຊື້ອເພີ່ມໃໝ່ໃນແຕ່ລະວັນ ຢູ່ທ້ອງຖິ່ນໃດ ແມ່ນໃຫ້ຄະນະສະເພາະກິດທ້ອງຖິ່ນນັ້ນ ລາຍງານຂໍ້ມູນໃຫ້ຄະນະສະເພາະກິດຂັ້ນສູນກາງ ແລະ ແຈ້ງໃຫ້ທ້ອງຖິ່ນອື່ນ ຊາບ ຢ່າງທັນການ ແລະ ທົ່ວເຖິງ ເພື່ອເປັນບ່ອນອີງໃຫ້ພາກສ່ວນຕ່າງໆ ພິຈາລະນາ. ພ້ອມກັນນັ້ນ, ກໍ່ໃຫ້ມີມາດຕະການຕ່າງໆທີ່ເໝາະສົມຕື່ມ ໃນທ້ອງຖິ່ນຂອງຕົນເອງ.

4. ສຳລັບການປະເມີນຜົນກະທົບທາງດ້ານເສດຖະກິດ ໃນໄລຍະການສັ່ງປິດຕົວເມືອງຕ່າງໆ ຢູ່ນະຄອນຫຼວງວຽງຈັນ ແລະບັນດາແຂວງ ນັ້ນ, ມອບໃຫ້ຄະນະສະເພາະກິດ ຕາມຂໍ້ຕົກລົງຂອງ ນາຍົກລັດຖະມົນຕີ ເລກທີ 32/ນຍ, ລົງວັນທີ 3 ເມສາ 2020 ສືບຕໍ່ປະເມີນຜົນກະທົບດັ່ງກ່າວ ແລະ ສະເໜີນະໂຍບາຍ, ມາດຕະການ ແລະ ວິທີການໃນການແກ້ໄຂ ໃຫ້ລັດຖະບານພິຈາລະນາ.

5. ເຫັນດີໃຫ້ຮັບເອົາການສະເໜີປະກອບສ່ວນທຶນໃນການຈັດຊື້ວັກຊີນກັນພະຍາດ **COVID**-19 ຂອງພາກທຸລະກິດ ກໍຄືພາກສ່ວນຕ່າງໆ ເພື່ອມາສັກໃຫ້ພະນັກງານບໍລິສັດຂອງຕົນ ແລະ ພາກສ່ວນອື່ນ ໂດຍຜ່ານບົດບາດຂອງຄະນະສະເພາະກິດແຕ່ລະຂັ້ນ ຊຶ່ງໃຈກາງແມ່ນກະຊວງສາທາລະນະສຸກ.

6. ໃຫ້ບັນດາຂະແໜງການ, ອົງການທຽບເທົ່າ ຂັ້ນສູນກາງ ແລະ ອົງການປົກຄອງທ້ອງຖິ່ນທຸກຂັ້ນ ຈັດຕັ້ງຜັນຂະຫຍາຍແຈ້ງການສະບັບນີ້ ໂດຍສົມທົບກັບການຈັດຕັ້ງປະຕິບັດຄຳສັ່ງເລກທີ 15/ນຍ ແລະ ຄຳແນະນຳຂອງຄະນະສະເພາະກິດວາງອອກ ໃນແຕ່ລະໄລຍະ ຢ່າງເຂັ້ມງວດ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ປະຕິບັດຕາມເນື້ອໃນແຈ້ງການສະບັບນີ້ດ້ວຍ.

ລັດຖະມົນຕີ,

ຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ

ຄຳເຈນ ວົງໂພສີ

ບ່ອນນຳສົ່ງ:

| | | |
|---|---|---|
| - ນາຍົກ-ຮອງນາຍົກລັດຖະມົນຕີ | | 04 ສະບັບ |
| - ຫ້ອງວ່າການສູນກາງພັກ | | 01 ສະບັບ |
| - ອົງການຈັດຕັ້ງພັກ | ບ່ອນລະ | 01 ສະບັບ |
| - ສູນກາງແນວລາວສ້າງຊາດ | | 01 ສະບັບ |
| - ອົງການຈັດຕັ້ງມະຫາຊົນ | ບ່ອນລະ | 01 ສະບັບ |
| - ຄະນະເລຂາທິການສະພາແຫ່ງຊາດ | | 01 ສະບັບ |
| - ຄະນະ ຫສນຍ, ທ່ານລະ | | 01 ສະບັບ |
| - ສຳເນົາ | | 01 ສະບັບ |